ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ບົດລາຍງານ
# ແຜນຈັດສັນ ການນຳໃຊ້ທີ່ດິນ ບ້ານ ທາດຫຼວງ
# ນະຄອນ ຫຼວງພະບາງ, ແຂວງ ຫຼວງພະບາງ




ກະກຽມໂດຍ:
ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ຫຼວງພະບາງ
ຂະແໜງ ຊັບພະຍາກອນນ້ຳ ອຸຕຸນິຍົມ ແລະ ອະທິກາກະສາດ
2025

# ສາລະບານ


I. ຈຸດປະສົງ ແລະ ລະດັບຄາດໝາຍ ........ 1

1. ຈຸດປະສົງ ........ 1
2. ລະດັບຄາດໝາຍ ........ 1
3. ຂັ້ນຕອນການຈັດຕັ້ງປະຕິບັດ ........ 2

II. ສະພາບລວມຂອງບ້ານ ........ 2

1. ປະຫວັດຄວາມເປັນມາຂອງບ້ານ ........ 2
2. ດ້ານການປົກຄອງ ........ 2
3. ດ້ານການຄຸ້ມຄອງ ........ 3
4. ສະພາບການນຳໃຊ້ທີ່ດິນ ........ 4
5. ດ້ານເສດຖະກິດສັງຄົມ ........ 5
6. ດ້ານວັດທະນະທຳຮີດຄອງປະເພນີ ........ 5
7. ດ້ານວຽກງານວັດທະນະທຳ - ສັງຄົມ ........ 5
8. ດ້ານວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ ........ 5

**ສາລະບານຕາຕະລາງ**

ຕາຕະລາງ 1 ເຂດແດນຕິດເໜືອກັບ ບ້ານ ວັດທາດ............................................................................3
ຕາຕະລາງ 2 ເຂດແດນຕິດກັບ ບ້ານ ມະໂນ...................................................................................3
ຕາຕະລາງ 3 ເຂດແດນຕິດກັບ ບ້ານ ວຽງໄຊ ແລະບ້ານ ທົ່ງຈະເລີນ.........................................................3
ຕາຕະລາງ 4 ເຂດແດນຕິດກັບ ບ້ານ ຜະບາດໃຕ້..............................................................................3
ຕາຕະລາງ 5 ປະເພດ ການນຳໃຊ້ທີ່ດິນຂອງບ້ານ..............................................................................4

**ສາລະບານ ຮູບ**

ຮູບທີ 1 ປະເພດທີ່ດິນ ແຍກຕາມລະຫັດບ້ານ........................................................................7
ຮູບທີ່ 2 ການລົງສຳຫຼວດພາກສະໜາມ...............................................................................8

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເຈົ້ານະຄອນ ຫຼວງພະບາງ

ເລກທີ 206/ຈນ-ຫຼບ

ລົງວັນທີ 18 ກຸມພາ 2025

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງເອົາແຜນການນຳໃຊ້ທີ່ດິນ ແລະ ການປັກຫຼັກໝາຍ ຂອງ ບ້ານທາດຫຼວງ ກັບບ້ານອ້ອມຂ້າງທີ່ມີເຂດແດນຕິດກັນ ພາຍໃນ ນະຄອນ ຫຼວງພະບາງ

- **ອີງຕາມ**: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015;
- **ອີງຕາມ**: ກົດໝາຍວ່າດ້ວຍທີ່ດິນ, ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- **ອີງຕາມ:** ຂໍ້ຕົກລົງຂອງທ່ານເຈົ້າແຂວງຫຼວງພະບາງ, ສະບັບເລກທີ 326/ຈຂ.ຫຼບ, ລົງວັນທີ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງ ນະຄອນ ຫຼວງພະບາງ.
- **ອີງຕາມ:** ໜັງສືສະເໜີຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມນະຄອນ, ສະບັບເລກທີ 17/ຫຊສມ, ລົງວັນທີ 3 ກຸມພາ 2025.

## ເຈົ້ານະຄອນ ຫຼວງພະບາງ ຕົກລົງ:

**ມາດຕາ 1:** ເຫັນດີຮັບຮອງເອົາແຜນການນຳໃຊ້ທີ່ດິນ ແລະ ການປັກຫຼັກໝາຍເຂດແດນຂອງ ບ້ານ ທາດຫຼວງ ທີ່ຕິດກັບ ບ້ານວັດທາດ, ບ້ານມະໂນ, ບ້ານພະບາດໃຕ້ ແລະ ບ້ານ ທົ່ງຈະເລີນ ນະຄອນ ຫຼວງພະບາງ, ແຂວງຫຼວງພະບາງ.

**ມາດຕາ 2:** ມອບໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນ ເປັນໃຈກາງສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງນຳໃຊ້ທີ່ດິນ ໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມແຜນຈັດສັນທີ່ດິນ ສະບັບນີ້, ທຸກການປ່ຽນແປງປະເພດການນຳໃຊ້ທີ່ດິນ ຈະຕ້ອງໄດ້ຜ່ານການພິຈາລະນາຈາກຂະແໜງການທີ່ກ່ຽວຂ້ອງ ແລະ ນຳສະເໜີໃຫ້ຂັ້ນເທິງ ອະນຸຍາດຕາມລະບຽບຫຼັກການ.

**ມາດຕາ 3:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້ານະຄອນ ຫຼວງພະບາງ**

ວຽງທອງ ຫັດສະຈັນ
Viengthong HATSACHANH

**ບ່ອນນຳສົ່ງ**

- ຫ້ອງການ ຊສ ນະຄອນ 1 ສະບັບ;
- ພາກສ່ວນທີ່ກ່ຽວຂ້ອງ 1 ສະບັບ;
- ສຳເນົາ 1 ສະບັບ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫຼວງພະບາງ
ນະຄອນ ຫຼວງພະບາງ
ຂາເຂົ້າ ເລກທີ່....201....
ລົງວັນທີ່ 11.2.25

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງພະບາງ ເລກທີ....17....ຫຊສມ

## ໃບສະເໜີ

ຮຽນ: ທ່ານ ເຈົ້ານະຄອນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ: ຂໍອະນຸມັດລົງລາຍເຊັນ ໃສ່ຂໍ້ຕົກລົງຮັບຮອງແຜນຈັດສັນທີ່ດິນ ແລະ ການປັກຫຼັກໝາຍ ເຂດແດນ ບ້ານ ທາດຫຼວງ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015,
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ

ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມນະຄອນຫຼວງພະບາງ ຂໍຖືເປັນກຽດ ເປັນຢ່າງ ສູງຮຽນສະເໜີ ມາຍັງທ່ານເພື່ອຂໍອະນຸມັດລົງລາຍເຊັນໃສ່ຂໍ້ຕົກລົງ ຮັບຮອງແຜນຈັດສັນທີ່ດິນ ແລະ ການປັກຫຼັກໝາຍເຂດແດນຂັ້ນບ້ານຂອງ ບ້ານ ທາດຫຼວງ, ນະຄອນ ຫຼວງພະບາງ.

ດັ່ງນັ້ນ, ຈິ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມເຫັນສົມຄວນດ້ວຍ.

ຫົວໜ້າຫ້ອງການ

ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງພະບາງ

ຫ້ອງການຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນ-ຫຼວງພະບາງ

ສຸພານຸສິດ ອາລຸນ

Mr Souphanousith AROUNE

**ຄຳນຳ**

ແຂວງ ຫຼວງພະບາງ ໄດ້ສ້າງແຜນຈັດສັນທີ່ດິນ ແລະ ຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ ເພື່ອເປັນບ່ອນອີງໃນການຄຸ້ມຄອງ, ນຳໃຊ້ຊັບພະຍາກອນທຳມະຊາດທີ່ກຳລັງເປັນບັນຫາສຳຄັນ ໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ໃນໄລຍະໃໝ່, ສ້າງໃຫ້ແຂວງມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ຍຸຕິທຳ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ, ມີພື້ນຖານໃນການຫັນເປັນອຸດສາຫະກຳ-ທັນສະໄໝ, ສະເລ່ຍລາຍໄດ້ຕໍ່ຫົວຄົນ 2.362 ໂດລາ ໃນປີ 2020; ການພັດທະນາສົມດຸນລະຫວ່າງເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ, ສອດຄ່ອງກັບສະພາບຄວາມເປັນຈິງຕາມເງື່ອນໄຂຕົວຈິງ, ທ່າແຮງທີ່ບົ່ມຊ້ອນຂອງແຂວງ, ລະບົບກົງຈັກການບໍລິຫານ, ການຄຸ້ມຄອງມີຄວາມເຂັ້ມແຂງ,ຊັບພະຍາກອນມະນຸດ ໄດ້ຮັບການພັດທະນາໃຫ້ມີຄຸນນະພາບ, ພຽງພໍ ກັບຄວາມຕ້ອງການໃນການພັດທະນາ,ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງມີປະສິດທິຜົນ.

ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານສະບັບນີ້ເປັນເຄື່ອງມືທາງດ້ານນິຕິກຳທີ່ສຳຄັນທີ່ອຳນວຍຄວາມສະດວກໃຫ້ແກ່ການຕັດສິນໃຈໃນການພັດທະນາໃຫ້ໄວຂຶ້ນໂດຍສະເພາະການພິຈາລະນາປັດໃຈທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມເພື່ອກຳນົດແຜນການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ສອດຄ່ອງກັບແຜນແມ່ບົດການຈັດສັນທີ່ດິນແຫ່ງຊາດ, ຄຸ້ມຄອງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ຕາມລະບຽບກົດໝາຍ, ນຳໃຊ້ຊັບພະຍາກອນທີ່ມີ ເພື່ອສ້າງຜົນປະໂຫຍດສູງສຸດໃຫ້ແກ່ທ້ອງຖິ່ນ. ໃນການ ຄຸ້ມຄອງຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມຢ່າງຈະແຈ້ງເປັນຕົ້ນແມ່ນເຂດທີ່ຢູ່ອາໄສ, ເຂດກະສິກຳ, ເຂດອຸດສາຫະກຳ ແລະ ເຂດອື່ນໆ... ໂດຍໄດ້ກຳນົດຫຼັກການ ແລະ ມາດຕະການ ໃນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ພ້ອມທັງມີມາດຕະການໃນການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງແຕ່ລະຂົງເຂດວຽກງານ.

ສະນັ້ນ, ເພື່ອຈັດຕັ້ງປະຕິບັດບັນດາວິໄສທັດ ຍຸດທະສາດໃນການພັດທະນາເສດຖະກິດ-ສັງຄົມຂອງ ແຂວງ ຫຼວງພະບາງແຕ່ລະໄລຍະໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຈຸດສຸມ, ມີຄວາມໝັ້ນຄົງ, ມີຄວາມຍືນຍົງແມ່ນມີຄວາມຈຳເປັນຕ້ອງໄດ້ນຳໃຊ້ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານສະບັບນີ້ ເປັນທິດທາງ, ນະໂຍບາຍອັນສຳຄັນເຂົ້າໃນການພັດທະນາໃນແຕ່ລະດ້ານ.

# ສັງລວມຫຍໍ້

ບ້ານ ທາດຫຼວງ ແມ່ນບ້ານໜຶ່ງທີ່ຂຶ້ນກັບກຸ່ມ ມະໂນ ເຊິ່ງຕັ້ງຢູ່ໃນເທດສະບານນະຄອນ ຫຼວງພະບາງມີເຂດແດນ ຕິດກັບ 4 ບ້ານ ຄື: ທິດເໜືອ ຕິດກັບ ວັດທາດ, ທິດໃຕ້ ຕິດກັບ ບ້ານ ມະໂນ, ທິດຕາເວັນອອກ ຕິດກັບ ບ້ານ ວຽງໄຊ ແລະ ບ້ານ ທົ່ງຈະເລີນ, ທິດຕາເວັນຕົກ ຕິດກັບ ບ້ານ ພະບາດໃຕ້, ຕັ້ງຢູ່ເຂດການບໍລິການການຄ້າ ບໍ່ໄກຈາກຕະຫຼາດ ປະຊາຊົນບັນດາເຜົ່າ ພາຍໃນບ້ານມີທ່າແຮງ ໃນການປະກອບອາຊີບ ການຄ້າຂາຍ ການບໍລິການໂຮງແຮມບ້ານພັກ ການປຸງແຕ່ງອາຫານ ແລະ ການບໍລິການຂົນສົ່ງ, ລວມທັງປະກອບອາຊີບອິດສະຫຼະຫຼາກຫຼາຍ,

ບ້ານ ທາດຫຼວງ ເປັນບ້ານດັ້ງເດີມ ທັງເປັນບ້ານເກີດຂອງ ອາດີດ ປະທານ ສຸພານຸວົງ ໃນປະຈຸບັນ ປະຊາຊົນສ່ວນໃຫຍ່ ຍຶດອາຊີບ ຄ້າຂາຍ-ບໍລິການ ຈຳນວນໜຶ່ງ ກໍ່ໄດ້ປະກອບອາຊີບ ການບໍລິການ ແລ່ນລົດ, ປຸງແຕ່ງອາຫານ. ບ້ານ ທາດຫຼວງ ມີລະບົບການຂົນສົ່ງທາງບົກ ທີ່ສະດວກສະບາຍ ປະຊາຊົນທົ່ວບ້ານສາມາດນຳໃຊ້ໄຟຟ້າ, ນ້ຳປະປາ.

ການນຳໃຊ້ທີ່ດິນຂອງ ບ້ານ ທາດຫຼວງ ປະກອບມີ 5 ປະເພດ ຄື: ປະເພດທີ່ດິນປຸກສ້າງ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 20,37 ເຮັກຕາ, ປະກອບມີ ຂອງປະເພດຄື: ທີ່ດິນປູກສ້າງ ສ່ວນບຸກຄົນ 13,35 ເຮັກຕາ ແລະ ທີ່ດິນປຸກສ້າງ ຂອງລັດ 7,02 ເຮັກຕາ. ປະເພດ ທີ່ດິນວັດທະນະທຳແມ່ນ ມີແຕ່ປະເພດດຽວ ເປັນດິນລວມຂອງວັດ ມີເນື້ອທີ່ 1,37 ເຮັກຕ່າ, ປະເພດ ທີ່ດິນອຸດສາກະກຳ ແມ່ນ ມີແຕ່ປະເພດດຽວ ເປັນດິນ ສະຖານທີ່ອຸດສາຫະກຳ ມີເນື້ອທີ່ 0,42 ເຮັກຕ່າ, ປະເພດທີ່ດິນ ໂຍທາ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 2,1 ເຮັກຕາ, ປະກອບມີ ຂອງປະເພດຄື: ທີ່ດິນທາງປູຢາງ ມີເນື້ອທີ່ 1,29 ເຮັກຕາ ແລະ ທີ່ດິນທາງດິນແດງ 0,81 ເຮັກຕາ. ແລະ ປະເພດ ທີ່ດິນບໍລິເວນນ້ຳແມ່ນ ມີແຕ່ປະເພດດຽວ ເປັນດິນໜອງນ້ຳ ມີເນື້ອທີ່ 0,93 ເຮັກຕ່າ.

## I. ຈຸດປະສົງ ແລະ ລະດັບຄາດໝາຍ

### 1. ຈຸດປະສົງ

ນະຄອນຫຼວງພະບາງ ຖືວ່າເປັນສູນກາງການຂົນສົ່ງ ແລະ ການທ່ອງທ່ຽວທີ່ສຳຄັນທາງພາກເໜືອຂອງ ສປປ ລາວ ທີ່ມີການຂະຫຍາຍຕົວໄວ ຊຶ່ງມີທີ່ຕັ້ງຢູ່ລະຫວ່າງຈຸດທີ່ເຊື່ອມຕໍ່ຂອງແມ່ນ້ຳຂອງ ແລະ ສາຍນ້ຳຄານ. ພື້ນທີ່ບໍລິເວນທາງດ້ານປະຫວັດ ສາດ ແລະ ພູມສັນຖານອ້ອມຮອບທີ່ສຳຄັນຂອງນະຄອນດັ່ງກ່າວ ໄດ້ຖືກບັນທຶກໄວ້ໃນເອກະສານທາງດ້ານມໍລະດົກໂລກຂອງ ອົງການສະຫະປະຊາຊາດເພື່ອ ການສຶກສາ ວິທະຍາສາດ ແລະ ວັດທະນະທຳ (ຫຼື ອົງການ UNESCO) ໃນປີ 1995

ນະຄອນຫຼວງພະບາງ, ກໍເປັນເມືອງໜຶ່ງທີ່ນອນໃນເປົ້າໝາຍຂອງໂຄງການຄຸ້ມຄອງຊັບພະຍາກອນ ນ້ຳແບບເຊື່ອມສານແລະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໂດຍອີງໃສ່ທ່າແຮງຂອງລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຼຽງ ແລະ ຕົວເມືອງຫຼວງພະບາງ. ນະຄອນຄອນຫຼວງພະບາງຕັ້ງຢູ່ຈຸດໃຈກາງຂອງແຂວງຫຼວງພະບາງ, ມີພົນລະເມືອງທັງໝົດ 96.755 ຄົນ, ຍິງ 48.055 ຄົນ, ມີທັງໝົດ 17.480 ຄອບຄົວ, ມີຈຳນວນ 115 ບ້ານ, ໃນນັ້ນ 65 ບ້ານແມ່ນນອນຢູ່ໃນເທດສະບານແລະ 50 ບ້ານຢູ່ນອກເທດສະບານ; ໂດຍໄດ້ກຳນົດເປັນ 15 ກຸ່ມບ້ານ, ມີ 9 ກຸ່ມໃນເທດສະບານແລະ 6 ກຸ່ມນອກເທດສະບານ, ປະຊາຊົນສ່ວນຫຼາຍຖືເອົາອາຊີບການບໍລິການ, ການປຸງແຕ່ງ, ການຄ້າຂາຍແລະຜະລິດກະສິກຳເປັນຕົ້ນຕໍ,ອັດຕາການເພີ່ມຂຶ້ນຂອງປະຊາກອນນະຄອນຫຼວງພະບາງສະເລ່ຍ 1,1 %

ສະພາບດິນຟ້າອາກາດມີອຸນຫະພູມສະເລ່ຍສູງສຸດ 35,1 ອົງສາແລະຕ່ຳສຸດສະເລ່ຍ 16,5 ອົງສາ, ປະລິມານນ້ຳຝົນໃນລະດັບສະເລ່ຍ 248,9 ມລ/ປີ, ລະດັບຄວາມສູງສະເລ່ຍ 247 ແມັດເຖິງ 1.425 ແມັດ (ທຽບໃສ່ລະດັບໜ້ານ້ຳທະເລ); ໃນແຕ່ລະປີມັກເກີດມີໄພພິບັດຈາກທຳມະຊາດຈຳນວນບໍ່ໜ້ອຍໂດຍສະເພາະແມ່ນລົມພະຍຸລະດູຮ້ອນ, ຝົນຕົກແຮງມີດິນເຊາະເຈື່ອນ, ນ້ຳໄຫຼສຸ, ນ້ຳຖ້ວມ, ຖະໜົນຫົນທາງເປ່ເພແລະອັກຄີໄພໄຟໄໝ້ອື່ນໆ, ເຮັດໃຫ້ມີຜົນກະທົບຕໍ່ ເຮືອນຊານບ້ານຊ່ອງ, ທີ່ຢູ່ອາໄສ, ຜົນຜະລິດກະສິກຳ, ການສັນຈອນ, ຍິ່ງກວ່ານັ້ນຈົນເຖິງຂັ້ນຄົນເຮົາເສຍຊີວິດ; ສະເລ່ຍເປັນມູນຄ່າເສຍຫາຍ 64.007.000 ກີບ.

ຈຸດປະສົງຂອງການສຳຫຼວດວາງແຜນຈັດສັນ ແລະ ການນຳໃຊ້ທີ່ດິນ ແມ່ນປັດໃຈຫຼັກທີ່ສຳຄັນໃນລະບົບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ທັງນີ້ກໍ່ເພື່ອເຮັດໃຫ້ການວາງແຜນຈັດສັນ ແລະ ການວາງແຜນການນຳໃຊ້ທີ່ດິນໃຫ້ມີການປະສົມປະສານຢ່າງກົມກຽວສອດຄ່ອງກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມຂອງແຕ່ລະເຂດ. ດັ່ງນັ້ນ, ຈຸດປະສົງຂອງການວາງແຜນສຳຫຼວດຈັດສັນທີ່ດິນຕ້ອງໄດ້ເລັ່ງໃສ່ໃນຂົງເຂດວຽກງານຫຼັກລຸ່ມນີ້:

1. ສຳຫຼວດ ປະເພດການນຳໃຊ່ທີ່ດິນ ຂອງບ້ານ ຕາມ 8 ປະເພດ ການນຳໃຊ້ທີ່ດິນ
2. ສຳຫຼວດ ຂອບເຂດແດນບ້ານ ເພື່ອປັກຫຼັກໝາຍ ຂອບເຂດການປົກຄອງຂອງບ້ານ
3. ສ້າງແຜນທີ່ ການຈັດສັນທີດິນ ແລະ ປັກຫຼັກໝາຍເຂດແດນບ້ານ

### 2. ລະດັບຄາດໝາຍ

1. ເຮັດໃຫ້ ບ້ານ ທາດຫຼວງ ມີແຜນຈັດສັນທີ່ດິນ ແລະ ແຜນທີ່ຂອບເຂດການປົກຄອງຂອງບ້ານ ທີ່ຖືກຮັບຮອງຢ່າງເປັນທາງການ ໂດຍທ່ານເຈົ້ານະຄອນຫຼວງພະບາງ ຜ່ານຄວາມເປັນເອກະພາບຈາກ

ບັນດາຂະແໜງການກ່ຽວຂ້ອງຂັ້ນນະຄອນ ແລະ ອົງການປົກຄອງບ້ານ ຊຶ່ງມີການເຂົ້າຮ່ວມຂອງ ປະຊາຊົນພາຍໃນບ້ານ.

2. ແຜນທີ່ຈັດສັນ ແລະ ພັດທະນາທີ່ດິນຂອງບ້ານ ນາສຳພັນ ໄດ້ຖືກພິມໃສ່ແຜ່ນໂຄສະນາ ແລະ ຖືກ ປັກໄວ້ຢູ່ບ້ານ ເພື່ອໃຫ້ ສາມາດເຫັນໄດ້ຢ່າງຈະແຈ້ງ.

3. **ຂັ້ນຕອນການຈັດຕັ້ງປະຕິບັດ**

❖ **ຂັ້ນຕອນທີ່ 1 ຂັ້ນຕອນການກະກຽມ**

- ກະກຽມ ບັນດາເອກະສານນິຕິກຳຕ່າງໆທີ່ກ່ຽວຂ້ອງກັບການຈັດສັນທີ່ດິນ ເພື່ອກຳນົດຈຸດໃນການປັກຫຼັກ ໝາຍ ເຂດແດນຂອງບ້ານ.
- ລົງເຜີຍແຜ່ ແລະ ເປີດກອງປະຊຸມປຶກສາຫາລືຄວາມເປັນເອກະພາບໃນການລົງຈັດຕັ້ງປະຕິບັດໃນຄັ້ງ ວັນທີ 9 / 12 / 2024.
- ລົງພາກສະໜາມຕົວຈິງເພື່ອສຳຫຼວດຈຸດທີ່ໄດ້ກຳນົດໄວ້

❖ **ບາດກ້າວທີ 2:ການສ້າງແຜນຈັດສັນທີ່ດິນ**

- ນຳຂໍ້ມູນທີ່ໄດ້ຈາກການລົງສະໜາມຕົວຈິງເຂົ້າໃນແຜນທີ່
- ສ້າງແຜນທີ່ ການນຳໃຊ້ທີ່ດິນໃນປະຈຸບັນ

❖ **ບາດກ້າວທີ່ 3: ສະເໜີຜ່ານຮ່າງແຜນຈັດສັນທີ່ດິນ**

- ສະເໜີ ຮ່າງແຜນຈັດສັນທີ່ດິນ ແລະ ການນຳນົດຈຸດປັກຫຼັກໝາຍເຂດແດນບ້ານ
- ປັບປຸງ ແຜນຈັດສັນຕາມການສະເໜີ ຂອງບັນດາຄະນະກຳມະການ ແລະ ອຳນາດການປົກຄອງບ້ານ

❖ **ບາດກ້າວທີ່ 4: ຮັບຮອງແຜນຈັດສັນທີ່ດິນ**

- ຮັບຮອງແຜນຈັດສັນທີ່ດິນທີ່ໄດ້ຮັບການປັບປຸງ ໄປຕາມແຕ່ລະຂັ້ນຕອນ

## II. ສະພາບລວມຂອງບ້ານ

1. ປະຫວັດຄວາມເປັນມາຂອງບ້ານ

ບ້ານ ທາດຫຼວງ ແມ່ນບ້ານໜຶ່ງທີ່ຂຶ້ນກັບກຸ່ມ ມະໂນ ເຊິ່ງຕັ້ງຢູ່ໃນເທດສະບານນະຄອນ ຫຼວງພະບາງ, ມີ ເນື້ອທີ່ ລວມທັງ 25,20 ເຮັກຕາ, ທົ່ວບ້ານ ມີຈຳນວນຄອບຄົວ 236 ຄອບຄົວ, ຈຳນວນຫຼັງຄາເຮືອນ 289 ຫຼັງຄາ , ຈຳນວນພົນລະເມືອງ 1.504 ຄົນ,ຍິງ 735 ຄົນ ໃນນັ້ນ ເຜົ່າລາວລຸ່ມມີ 150 ຄອບຄົວ ພົນລະເມືອງ 786 ຄົນ, ຍິງ 376 ຄົນ ,ເຜົ່າກຶ່ມມຸມີ 7 ຄອບຄົວ,ພົນລະເມືອງ 37ຄົນ,ຍິງ 25 ຄົນ,ເຜົ່າມົ້ງມີ 79 ຄອບຄົວ ພົນລະເມືອງ 681 ຄົນ, ຍິງ 334 ຄົນ, ບ້ານມີມູນເຊື້ອທ່າແຮງທາງດ້ານ ການບໍລິການ-ການຄ້າ,ການຜະລິດປຸງແຕ່ງ ແລະ ສີມືແຮງງານ ເປັນຕົ້ນແມ່ນການເຮັດທຸລະກິດຄ້າຂາຍ,ການບໍລິການທ່ອງທ່ຽວ,ອາຊີບ ພະນັກງານລັດ ແລະ ເອກະຊົນ,ນາຍຊ່າງ ກໍ່ສ້າງ,ກຳມະກອນ ແລະ ອື່ນໆ.

2. ດ້ານການປົກຄອງ

ວຽກງານອຳນາດການປົກຄອງ ຜ່ານມາພວກເຮົາໄດ້ຖືເປັນສຳຄັນ ໃນການເຕົ້າໂຮມຄວາມສາມາຄີເປັນ ເອກະພາບ ໃນທຸກວຽກງານ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ນຳພາ ເປັນຄະນະ ແລະ ແບ່ງວຽກໃຫ້ ບຸກຄົນຮັບຜິດຊອບ, ຈັດແບ່ງວຽກງານໃຫ້ບັນດາຫົວໜ່ວຍການຈັດຕັ້ງຂອງບ້ານ ໄດ້ປະຕິບັດາມພາລະບົດບາດ ສິດ

ແລະ ໜ້າທີ່ຂອງໃຜລາວ ດ້ວຍຄວາມຮັບຜິດຊອບຕາມການມອບໝາຍ. ຜ່ານມາອຳນາດການຄອງ ບ້ານປະກອບດ້ວຍນາຍບ້ານ 1 ທ່ານ, ຮອງນາຍບ້ານ 4 ທ່ານ. ຊຶ່ງໄດ້ມອບໝາຍແບ່ງໜ້າທີ່ຮັບຜິດຊອບ ກັນໂດຍນຊີ້ນຳ 5 ໜ່ວຍງານຊ່ວຍວຽກບ້ານ,ຕາມພາລະບົດບາດ ຕາມກົດໝາຍການປົກຄອງທ້ອງຖິ່ນ ສະບັບປັບປຸງ ເລກທີ..../ສພຊ ລົງວັນທີ 14 ທັນວາ 2015 ໃນການເຮັດໜ້າບໍລິຫານ ຈັດການວຽກງານຕ່າງໆ ຕະຫຼອດເຖິງການບໍລິ ການ ແລະນອຍຄວາມສະດວກ ໃຫ້ແກ່ພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນບ້ານ ໃນການເກັບກຳຄຸ້ມຄອງ ການເຂົ້າອອກ ຂອງພົນລະເມືອງ ຄຸ້ມຄອງບໍລິການ ເອກະສານທາງການ ກ່ຽວແກ່ເຖິງການເກີດ ການຕາຍ ຄຳຮ້ອງຕ່າງໆ... ການສ້າງແຜນ ການລະໄລຍະຂອງບ້ານ, ການຈັດຕັ້ງປະຊຸມເຜີຍແຜ່ເອກະສານ ແຈ້ງການ ນິຕິກຳຕ່າງໆ ຂອງຂັ້ນເທິງ ລົງສູ່ປະຊາຊົນໄດ້ ຮັບຢ່າງທົ່ວເຖິງ,

3. ດ້ານການຄຸ້ມຄອງ

ບ້ານ ທາດຫຼວງ ແມ່ນບ້ານໜຶ່ງທີ່ຂຶ້ນກັບກຸ່ມ ມະໂນ ເຊິ່ງຕັ້ງຢູ່ໃນເທດສະບານນະຄອນ ຫຼວງພະບາງມີເຂດແດນ ຕິດກັບ 4 ບ້ານ ຄື: ທິດເໜືອ ຕິດກັບ ວັດທາດ, ທິດໃຕ້ ຕິດກັບ ບ້ານ ມະໂນ, ທິດຕາເວັນອອກ ຕິດກັບ ບ້ານ ວຽງໄຊ ແລະ ບ້ານ ທົ່ງຈະເລີນ, ທິດຕາເວັນຕົກ ຕິດກັບ ບ້ານ ພະບາດໃຕ້.

❖ ທິດເໜືອ ຕິດກັບ ບ້ານ ວັດທາດ

ຕາຕະລາງ 1 ເຂດແດນຕິດເໜືອກັບ ບ້ານ ວັດທາດ

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 199627 | 2201545 | 3ແຍກ, ແຈໂຮງແຮມ ສຸວັນນະພູມ |

❖ ທິດໃຕ້ຕິດກັບ ບ້ານ ມະໂນ

ຕາຕະລາງ 2 ເຂດແດນຕິດກັບ ບ້ານ ມະໂນ

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 199344 | 2200959 | ເສົາໄຟ ແຈໂຮງແຮມປາລາໂຊນ |
| 2 | 199713 | 2201226 | ຂ້າງເຮືອນທ່ານຈານສຸກ |
| 3 | 199783 | 2201208 | ເສົາໄຟ ແຈໂຮງແຮມ ນະຄອນຫຼວງ |

❖ ທິດຕາເວັນອອກ ຕິດກັບ ບ້ານ ວຽງໄຊ ແລະ ບ້ານ ທົ່ງຈະເລີນ

ຕາຕະລາງ 3 ເຂດແດນຕິດກັບ ບ້ານ ວຽງໄຊ ແລະບ້ານ ທົ່ງຈະເລີນ

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 199893 | 2201289 | ແຈຮ້ານຂາຍເຄື່ອງ ນາງ ສີມອນ |

❖ ທິດຕາເວັນຕົກຕິດກັບ ບ້ານ ພະບາດໃຕ້

ຕາຕະລາງ 4 ເຂດແດນຕິດກັບ ບ້ານ ພະບາດໃຕ້

| ລ/ດ | ຄ່າພິກັດ | | ລາຍລະອຽດ |
|---|---|---|---|
| | E | N | |
| 1 | 199071 | 2201067 | 3ແຍກ, ປໍ້ານໍ້າມັນພູສີເກົ່າ |

## 4. ສະພາບການນຳໃຊ້ທີ່ດິນ

ບ້ານ ທາດຫຼວງ ເປັນບ້ານໜຶ່ງທີ່ນອນຢູ່ໃນ ຈຳນວນບ້ານ ຂອງ ນະຄອນຫຼວງພະບາງ, ການນຳໃຊ້ທີ່ດິນກວມສ່ວນຫຼາຍ ແມ່ນ ທີ່ດິນປຸກສ້າງ ກວມເອົາ 80,87% ຂອງເນື້ອທີ່ດິນທັງໝົດ, ນອກຈາກນີ້ຍັງມີທີ່ດິນວັດທະນະທຳ, ທີ່ດິນອຸດສາຫະກຳ, ທີ່ດິນໂຍທາທິການ ແລະ ທີ່ດິນບໍລິເວນນ້ຳ ເຊິ່ງມີລາຍລະອຽດດັ່ງນີ້:

❖ **ປະເພດທີ່ດິນປຸກສ້າງ**

ປະເພດທີ່ດິນປຸກສ້າງ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 20,37 ເຮັກຕາ, ປະກອບມີ ຂອງປະເພດຄື: ທີ່ດິນປູກສ້າງ ສ່ວນບຸກຄົນ 13,35 ເຮັກຕາ ແລະ ທີ່ດິນປຸກສ້າງ ຂອງລັດ 7,02 ເຮັກຕາ.

❖ **ປະເພດທີ່ດິນວັດທະນະທຳ**

ປະເພດ ທີ່ດິນວັດທະນະທຳແມ່ນ ມີແຕ່ປະເພດດຽວ ເປັນດິນລວມຂອງວັດ ມີເນື້ອທີ່ 1,37 ເຮັກຕ່າ

❖ **ປະເພດທີ່ດິນອຸດສາຫະກຳ**

ປະເພດ ທີ່ດິນອຸດສາກະກຳ ແມ່ນ ມີແຕ່ປະເພດດຽວ ເປັນດິນ ສະຖານທີ່ອຸດສາຫະກຳ ມີເນື້ອທີ່ 0,42 ເຮັກຕ່າ.

❖ **ປະເພດທີ່ດິນໂຍທາ**

ປະເພດທີ່ດິນ ໂຍທາ ແມ່ນມີເນື້ອທີ່ ທັງໝົດ ແມ່ນ 2,1 ເຮັກຕາ, ປະກອບມີ ຂອງປະເພດຄື: ທີ່ດິນທາງປູຢາງ ມີເນື້ອທີ່ 1,29 ເຮັກຕາ ແລະ ທີ່ດິນທາງດິນແດງ 0,81 ເຮັກຕາ.

❖ **ປະເພດທີ່ດິນບໍລິເວນນ້ຳ**

ປະເພດ ທີ່ດິນບໍລິເວນນ້ຳ ແມ່ນ ມີແຕ່ປະເພດດຽວ ເປັນດິນໜອງນ້ຳ ມີເນື້ອທີ່ 0,93 ເຮັກຕ່າ.

ຕາຕະລາງ 5 ປະເພດ ການນຳໃຊ້ທີ່ດິນຂອງບ້ານ

| ລ/ດ | ປະເພດດິນ | ລະຫັດ | ເນື້ອທີ່ | ເປີເຊັນ (%) |
|---|---|---|---|---|
| I | ທີ່ດິນປຸກສ້າງ | BZ | 20.37 | 80,87 |
| 1 | ດິນປຸກສ້າງສ່ວນບຸກຄົນ | BZ_1 | 13.35 | 53 |
| 2 | ທີ່ດິນປຸກສ້າງຂອງລັດ | BZ_2 | 7.02 | 27.87 |
| II | ທີ່ດິນວັດທະນະທຳ | CZ | 1.37 | 5.44 |
| 1 | ທີ່ດິນວັດທະນະທຳ | CZ_1 | 1.37 | 5.44 |
| III | ທີ່ດິນອຸດສາຫະກຳ | IZ | 0.42 | 1.67 |
| 1 | ສະຖານທີ່ອຸດສາຫະກຳ | IZ_1 | 0.42 | 1.67 |
| IV | ທີ່ດິນໂຍທາ | RZ | 2.1 | 8.34 |
| 1 | ທາງປູຢາງ | RZ_1 | 1.29 | 5.12 |
| 2 | ທາງດິນແດງ | RZ_2 | 0.81 | 3.22 |
| V | ທີ່ດິນບໍລິເວນນ້ຳ | WZ | 0.93 | 3.69 |
| 1 | ໜອງນ້ຳ | WZ_4 | 0.93 | 3.69 |

5. ດ້ານເສດຖະກິດສັງຄົມ

ບ້ານພວກເຮົາໄດ້ປະຕິບັດແນວທາງປ່ຽນແປງໃໝ່ຂອງພັກ ວ່າດ້ວຍການພັດທະນາເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ ແລະ ບໍລິການເທື່ອລະກ້າວ, ເຊິ່ງໃນໄລຍະຜ່ານມາ ອຳນາດການປົກຄອງບ້ານພວກເຮົາ ໄດ້ອີງໃສ່ການຊີ້ນຳຂອງຂັ້ນເທິງ ຄົ້ນຄວ້າຫັນເປັນແຜນການ ເພື່ອນຳພາປະຊາຊົນຈັດຕັ້ງປະຕິບັດປະກອບອາຊີບ ຕາມຄວາມເໝາະສົມ ເປັນຕົ້ນແມ່ນການຄ້າຂາຍ ບໍລິການ ລວມເຖິງການປະກອບອາຊີບບໍລິການແລ່ນລົດ ແລະ ການຊື້ຂາຍແລກປ່ຽນຜະລິດຕະພັນກະສິກຳ ແລະ ເຄື່ອງປ່າຂອງດົງ. ລວມຍອດລາຍຮັບຂອງຄອບຄົວພາຍໃນບ້ານບັນລຸໄດ້ 31 ຕື້ກີບ ສະເລ່ຍໃສ່ຫົວຄົນໜຶ່ງ ໄດ້37.170.263 ກີບຕໍ່ຄົນຕໍ່ປີ, ເທົ່າກັບ 1.689 ໂດລາສະຫະລັດ ຕໍ່ຄົນຕໍ່ປີ.

6. ດ້ານວັດທະນະທຳຮີດຄອງປະເພນີ

ໄດ້ຊຸກຍູ້ປະຊາຊົນບັນດາເຜົ່າພາຍໃນບ້ານອານຸລັກປົກປັກຮັກສາເສີມຂະຫຍາຍຮີດຄອງປະເພນີອັນດີງາມຂອງເຜົ່າ,ຂອງບ້ານ ໃນການຂະນົບທຳນຽມອັນດີງາມຂອງຊາດຂອງເຜົ່າເປັນປົກກະຕິ ຕາມຮີດ 12 ຄອງ 14 ການເຮັດບຸນກຸດສົງການປີໃໝ່ລາວ,ບຸນເກຼືອຂອງເຜົ່າກຶມມຸ,ບຸນກິນຈຽງຂອງເຜົ່າມົ້ງ,ບຸນສິນກິນທານແລະ ບຸນອື່ນໆ.

7. ດ້ານວຽກງານວັດທະນະທຳ - ສັງຄົມ

ປະຊາຊົນສ່ວນໃຫຍ່ພາຍໃນບ້ານ ແມ່ນຊົນເຜົ່າລາວລຸ່ມ ທີ່ໄດ້ຮັກສາຮີດຄອງປະເພນີ ສືບທອດມາເປັນແຕ່ລະໄລຍະ ປະຊາຊົນສ່ວນໃຫຍ່ນັບຖືສາສະໜາພຸດ ທຸກງານບຸນປະເພນີ ກໍ່ໄດ້ຕັ້ງໜ້າປະກອບສ່ວນເຂົ້າໃນຂະບວນການຕ່າງໆຂອງບ້ານຢ່າງຕັ້ງໜ້າ. ທົ່ວບ້ານມີວັດ 1 ແຫ່ງ, ເຊິ່ງເປັນສູນລວມທາງດ້ານຈິດໃຈ ໃນແຕ່ລະປີໄດ້ເຮັດບຸນສິນກິນທານຕາມຮີດຄອງປະເພນີ ລວມທັງມີການລະດົມທຶນຮອນ ເພື່ອປະຕິສັງຂອນວັດວາອາຮາມ ຕາມລັງສັດທາຂອງພໍ່ແມ່ປະຊາຊົນ ໂດຍການເປັນເຈົ້າຂອງແນວໂຮມບ້ານ ທີ່ໄດ້ຮັບການຊຸກຍູ້ຈາກອຳນາດການປົກຄອງບ້ານ. ທົ່ວບ້ານມີຄອບຄົວວັດທະນະທຳ 145 ຄອບ ກວມ 100% ແລະ ບ້ານພວກເຮົາໄດ້ຖືກຮັບຮອງເປັນບ້ານວັດທະນະທຳໃນຕົ້ນປີ 2015.

8. ດ້ານວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ

ໃນຊຸມປີຜ່ານມາເຫັນວ່າ ປກສ ແລະ ປກຊ ກໍ່ໄດ້ມີການປັບປຸງແບບແຜນວິທີເຮັດວຽກ ແລະ ເຄື່ອນໄຫວປະຕິບັດສິດໜ້າທີ່ຕາມພາລະບົດບາດຂອງຕົນ ກໍ່ຄືຄຳສັ່ງຂອງຂັ້ນເທິງ, ການປ້ອງການເວນຍາມ ໃນວັນສຳຄັນຂອງຊາດ ແລະ ວັນບຸນຕ່າງໆ, ໂດຍສະເພາະແມ່ນການລົງກວດກາເໜັງຕີງຂອງພົນລະເມືອງ, ກວດກາຄົນມາພັກເຊົາ, ຄົນເຂົ້າ-ອອກ,ກວດກາແກ້ໄຂບັນຫາຕ່າງໆພາຍໃນບ້ານ ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ເຊັ່ນ: ຂີ້ລັກ, ຫຼິ້ນການພະນັນ, ມົ້ວສຸມເສບຢາເສບຕິດ, ດື່ມເຫຼົ້າອາລະວາດ ທີ່ເຮັດໃຫ້ເກີດມີຄວາມບໍ່ສະຫງົບ, ໜ່ວຍ ປກສ ແລະ ຝຶກຂອງພວກ ເຮົາກໍປະຕິບັດໄດ້ຢ່າງເຂັ້ມງວດ ຄິດເປັນເປີເຊັນ 100%.




ຮູບທີ 1: ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ



ຮູບທີ 2: ການລົງສຳຫຼວດພາກສະໜາມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ ເລກທີ 18.../ຫອ.ນ

# ບົດບັນທຶກ

ການກໍານົດເຂດຄຸ້ມຄອງລະຫວ່າງ ບ້ານ ທາດຫຼວງ ແລະ ບ້ານ ພະບາດໃຕ້

– ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.

– ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;

– ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນໍາ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.

– ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ ບ້ານ ທາດຫຼວງ ແລະ ບ້ານ ມະໂນ ຄັ້ງວັນທີ 8 / 01 /2025.

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນນານ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອໍານາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໄດ້ເຫັນດີເປັນເອກະພາບກັນ ກໍານົດຂອບ ເຂດຄຸ້ມ ຄອງລະຫວ່າງບ້ານຕໍ່ບ້ານ:

ຜ່ານການປະຊຸມປຶກສາຫາລືກັນ, ນໍາໃຊ້ເຕັກນິກການກໍານົດດ້ວຍກ້ອງ GPS Garmin ສົມທຽບນໍາພາບຖ່າຍ ດາວທຽມ ແລະ ລົງສໍາຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 199071 | 2201067 | 3 ແຍກ, ປ້ຳນ້ຳມັນພູສີເກົ່າ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນໍາໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ...ທາດຫຼວງ... ພະຍານ ບ້ານ.......................................

ຈັນສຸກ ກຸນທະວົງ

2. ນາຍບ້ານ ບ້ານ...ພະບາດ... ພະຍານ ບ້ານ.......................................

ບ. ສົມຈັນ ອຸດົມລິດ

| ເຈົ້ານະຄອນຫຼວງພະບາງ | ຫົວໜ້າ ຫ້ອງການພາຍໃນ | ຫົວໜ້າ ຫ້ອງການ ຊສ ນະຄອນ |
|---|---|---|
| ວຽງທອງ ຫັດສະຈັນ<br>Viengthong HATSACHANH | ບ. ແສງທອງ ລາທິພົງ | ສຸພານຸສິດ ອາລຸນ<br>Mr Souphanousith AROUNE |

สาทาละนะลัด ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ　　　　　　　　　　　　　　　　　　　　ເລກທີ...18.../ ຫນຸສມ.

**ບົດບັນທຶກ**

ການກຳນົດເຂດຄຸ້ມຄອງລະຫວ່າງ ບ້ານ ຫາດຫຼວງ ແລະ ບ້ານ ມະໂນ

– ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.

– ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;

– ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.

– ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ ບ້ານ ຫາດຫຼວງ ແລະ ບ້ານ ມະໂນ ຄັ້ງວັນທີ 8 / 01 /2025.

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນນານ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໄດ້ເຫັນດີເປັນເອກະພາບກັນ ກຳນົດຂອບ ເຂດຄຸ້ມ ຄອງ ລະຫວ່າງບ້ານຕໍ່ບ້ານ:

ຜ່ານການປະຊຸມປຶກສາຫາລືກັນ, ນຳໃຊ້ເຕັກນິກການກຳນົດດ້ວຍກ້ອງ GPS Garmin ສົມທຽບນຳພາບຖ່າຍ ດາວທຽມ ແລະ ລົງສຳຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານ ດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 199344 | 2200959 | ເສົາໄຟ ແຈໂຮງແຮມປາລາໂຊນ |
| 2 | 199713 | 2201226 | ຂ້າງເຮືອນທ່ານຈານສຸກ |
| 3 | 199783 | 2201208 | ເສົາໄຟ ແຈໂຮງແຮມ ນະຄອນຫຼວງ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນຳໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ...ຫາດຫຼວງ...　　　　ພະຍານ ບ້ານ.......................................

ຈັນສຸກ ກຸນທະວົງ

2. ນາຍບ້ານ ບ້ານ...ມະໂນ...　　　　ພະຍານ ບ້ານ.......................................

ຊາຍແກ້ວ ລົງສະຫວັດ

| ເຈົ້ານະຄອນຫຼວງພະບາງ | ຫົວໜ້າ ຫ້ອງການພາຍໃນ | ຫົວໜ້າ ຫ້ອງການ ຊສ ນະຄອນ |
|---|---|---|
| ວຽງທອງ ຫັດສະຈັນ<br>Viengthong HATSACHANH | ນ. ແສງທອງ ລາທິພົງ | ສຸພານຸສິດ ອາລຸນ<br>Mr Souphanousith AROUNE |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ ເລກທີ 18 ../ທາຫສບ

## ບົດບັນທຶກ

ການກຳນົດເຂດຄຸ້ມຄອງລະຫວ່າງ ບ້ານ ທາດຫຼວງ ແລະ ບ້ານ ວັດທາດ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.
- ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ ບ້ານ ທາດຫຼວງ ແລະ ບ້ານ ມະໂນ ຄັ້ງວັນທີ 8 / 01 /2025.

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນຍາວ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໄດ້ເຫັນດີເປັນເອກະພາບກັນ ກຳນົດຂອບ ເຂດຄຸ້ມ ຄອງລະຫວ່າງບ້ານຕໍ່ບ້ານ:

ຜ່ານການປະຊຸມປຶກສາຫາລືກັນ, ນຳໃຊ້ເຕັກນິກການກຳນົດດ້ວຍກ້ອງ GPS Garmin ສົມທຽບນຳພາບຖ່າຍ ດາວທຽມ ແລະ ລົງສຳຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 199627 | 2201545 | 3 ແຍກ, ແຈໂຮງແຮມ ສຸວັນນະພູມ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນຳໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ.....ທາດຫຼວງ..... ພະຍານ ບ້ານ..........................................
ສົມສຸກ ກຸນທະວົງ

2. ນາຍບ້ານ ບ້ານ.....ວັດທາດ..... ພະຍານ ບ້ານ..........................................
ຄຳນົ່ງ ເມືອງຫຼວງ

ເຈົ້ານະຄອນຫຼວງພະບາງ | ຫົວໜ້າ ຫ້ອງການພາຍໃນ | ຫົວໜ້າ ຫ້ອງການ ຊສ ນະຄອນ

ວຽງທອງ ຫັດສະຈັນ
Viengthong HATSACHANH

ນ. ແສງທອງ ລາທິພົງ

ສຸພານຸສິດ ອາລຸນ
Mr Souphanousith AROUNE

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງພະບາງ　　　　　　　　　　　　　　　　　　　　ເລກທີ 18 ../ ຫລຊ

## ບົດບັນທຶກ

ການກຳນົດເຂດຄຸ້ມຄອງລະຫວ່າງ ບ້ານ ທາດຫຼວງ ແລະ ບ້ານ ທົ່ງຈະເລີນ

– ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 15 ທັນວາ 2015.

– ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;

– ອີງຕາມ ຂໍ້ຕົກລົງ ສະບັບເລກທີ່ 326/ຈຂ.ຫຼບ, ລົງວັນທີ່ 26 ພຶດສະພາ 2023, ກ່ຽວກັບການແຕ່ງຕັ້ງ ຄະນະຊີ້ນຳ, ຜູ້ປະສານງານ ແລະ ວິຊາການ ໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ.

– ອີງຕາມ ກອງປະຊຸມປຶກສາຫາລື ແລະ ຢັ້ງຢືນໃຫ້ຂໍ້ມູນຈາກອົງການປົກຄອງລະຫວ່າງ ບ້ານ ທາດຫຼວງ ແລະ ບ້ານ ມະໂນ ຄັ້ງວັນທີ 8 / 01 /2025.

ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ ເຮັດໃຫ້ວຽກງານຄຸ້ມຄອງບໍລິຫານທີ່ດິນ ຢູ່ພາຍໃນແຕ່ລະບ້ານໃຫ້ມີຄວາມຈະແຈ້ງ, ສະດວກແກ່ການຄຸ້ມຄອງ ພັດທະນາທີ່ດິນໃຫ້ເກີດຜົນປະໂຫຍດສູງສຸດ ມີຄວາມຍືນນານ ແລະ ຮັກສາສິ່ງແວດລ້ອມ, ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ດັ່ງນັ້ນ, ອຳນາດການປົກຄອງບ້ານທີ່ກ່ຽວຂ້ອງພາຍໃນກຸ່ມ ຈຶ່ງໃດ້ເຫັນດີເປັນເອກະພາບກັນ ກຳນົດຂອບ ເຂດຄຸ້ມ ຄອງລະຫວ່າງບ້ານຕໍ່ບ້ານ:

ຜ່ານການປະຊຸມປຶກສາຫາລືກັນ, ນຳໃຊ້ເຕັກນິກການກຳນົດດ້ວຍກ້ອງ GPS Garmin ສົມທຽບນຳພາບຖ່າຍ ດາວທຽມ ແລະ ລົງສຳຫລວດເບິ່ງ ພື້ນທີ່ບາງຈຸດ ຈຶ່ງໄດ້ເຫັນດີເປັນເອກະພາບກັນກ່ຽວກັບຂອບເຂດຄຸ້ມຄອງ ລະຫວ່າງບ້ານຕໍ່ບ້ານດັ່ງລຸ່ມນີ້:

| ລ/ດ | E | N | ລາຍລະອຽດ |
|---|---|---|---|
| 1 | 199893 | 2201289 | ແຈຮ້ານຂາຍເຄື່ອງ ນາງ ສີມອນ |

ດັ່ງນັ້ນ, ຈຶ່ງໄດ້ສ້າງ ບົດບັນທຶກເຂດ ສະບັບນີ້ຂຶ້ນ ເພື່ອຢັ້ງຢືນ ແລະ ເປັນບ່ອນອີງໃນການພັດທະນາ, ຄຸ້ມຄອງນຳໃຊ້ ຕາມລະບຽບກົດໝາຍ.

ຜູ້ບັນທຶກ

1. ນາຍບ້ານ ບ້ານ.......................　　　　ພະຍານ ບ້ານ.......................................

ຈັນສຸກ ກຸນທະວົງ

2. ນາຍບ້ານ ບ້ານ.......................　　　　ພະຍານ ບ້ານ.......................................

ທະວີສັກ ວົງກົດ

ເຈົ້ານະຄອນຫຼວງພະບາງ　　　　ຫົວໜ້າ ຫ້ອງການພາຍໃນ　　　　ຫົວໜ້າ ຫ້ອງການ ຊສ ນະຄອນ

ວຽງທອງ ຫັດສະຈັນ
Viengthong HATSACHANH

ນ. ແສງທອງ ລາທີພົງ

ສຸພານຸສິດ ອາລຸນ
Mr Souphanousith AROUNE

ຕັ້ງປະຕິບັດໂດຍ

ສະໜັບສະໜູນ

ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານ
ລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ

The Intergrated Water Resource Management and Ecosystem-based Adaptation
in the Xe Bang Hieng River Basin and Luang Prabang City Project